**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ                                  ເລກທີ 0308 /ກອຢ
ໂທ: 214013-14, ແຟັກ: 213495                      ນະຄອນຫຼວງວຽງຈັນ, ວັນທີ 28 JAN 2025

## ໜັງສືແຈ້ງການ

**ເຖິງ:** - ກອງກວດກາອາຫານ ແລະ ຢາ;

- ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງວຽງຈັນ;
- ອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງສາກົນ
- ບັນດາຫົວໜ່ວຍທຸລະກິດ ນຳເຂົ້າ-ສົ່ງອອກ, ຜະລິດ ແລະ ຈຳໜ່າຍ ອາຫານ ແລະ ປະຊາຊົນ ໃນຂອບເຂດທົ່ວປະເທດ.

**ເລື່ອງ**: ການປັບປຸງເລກທະບຽນ ອຢ ຂອງຜະລິດຕະພັນອາຫານ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍອາຫານ, ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນອາຫານ (ສະບັບປັບປຸງ), ສະບັບເລກທີ 2749/ສທ, ລົງວັນທີ 28 ສິງຫາ 2023.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເລີ່ມແຕ່ ເດືອນ ມັງກອນ ປີ 2025 ເປັນຕົ້ນໄປ ກົມອາຫານ ແລະ ຢາ ຈະໄດ້ມີການປັບປຸງເລກທະບຽນ ອຢ ຈາກ 8 ໂຕເລກ ເປັນ 12 ໂຕເລກ ຂອງຜະລິດຕະພັນອາຫານ (ອຢ: X-XX-XXXXX-XXXX) ຊຶ່ງໄດ້ລະບຸໄວ້ໃນມາດຕາ 25 ເລກທະບຽນອາຫານ (ໃໝ່) ຂອງຂໍ້ຕົກລົງວ່າດ້ວຍທະບຽນອາຫານ (ສະບັບປັບປຸງ), ສະບັບເລກທີ 2749/ສທ, ລົງວັນທີ 28 ສິງຫາ 2023.

ຜະລິດຕະພັນອາຫານ ທີ່ໄດ້ຮັບການຂຶ້ນທະບຽນແລ້ວ ຕ້ອງໄດ້ລະບຸເລກທະບຽນ ອຢ ໃສ່ສະຫຼາກອາຫານທີ່ໄດ້ຂຶ້ນທະບຽນເທົ່ານັ້ນ ຍົກເວັ້ນຜະລິດະພັນເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນບໍ່ໃຫ້ລະບຸເລກທະບຽນ ອຢ ໃສ່ສະຫຼາກຜະລິດຕະພັນດັ່ງກ່າວ. ສຳລັບເລກທະບຽນເກົ່າສາມາດນຳໃຊ້ຈົນເຖິງວັນໝົດອາຍຸ ຫຼັງຈາກໝົດອາຍຸກໍ່ຈະປ່ຽນເປັນເລກທະບຽນໃໝ່.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າກົມ**

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວຫາວົງ